# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 5 ມິຖຸນາ 2022 (06-05-2022)

## ຖືກຕັດສິນລົງໂທດໂດຍພຣະວິນຍານບໍຣິສຸດ.

*ເມື່ອໃດທີ່ທ່ານຄິດວ່າທ່ານສູນເສັຽບາງສິ່ງບາງຢ່າງພຽງແຕ່ພົບວ່າມັນບໍ່ເຄີຍສູນເສັຽເລີຍແຕ່ເລີ້ມແລກ?*

**ຈຸດສຳຄັນໃນບົດຮຽນ:** ພຣະວິນຍານບໍຣິສຸດຊົງຕັດສິນໂທດບາບແລະຊົງຊີ້ໃຫ້ເຫັນຄວາມຈິງແຫ່ງຄວາມລອດພົ້ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຜູ້ອ່ານຂອງ ເຈອາອາ ໂທລກຽນ (J.R.R Tolkien) ກ່ຽວກັບຮູບເງົາ (movie) ເຣື່ອງ *The Lord of the Rings* ຮູ້ດີວ່າໃນສາກ (scene)ທີ່ແກນດາຟ(Gandalf)ໄດ້ຖືກລາກຂ້າມຂອບຂົວທີ່ຫັກໄປ. ແກນດາຟ ໄດ້ທົນຢູ່ເປັນເວລາດົນນານພຽງພໍທີ່ຈະບັງຄັບໝູ່ເພື່ອນຂອງລາວໃຫ້ບິນໜີອອກໄປ. ຫຼັງຈາກນັ້ນລາວໄດ້ຫາຍໄປຄາດວ່າບໍ່ມີຜູ້ໃດໄດ້ເຫັນລາວອີກ. ໂຟຣໂດ (Frodo) ແລະເພື່ອນຂອງລາວໄດ້ຫລົບຫນີໄປລອດຊີວິດ, ແຕ່ໂຟຣໂດຮູ້ສຶກເສັຽໃຈກັບການສູນເສັຽ ແກນດາຟ ຊຶ່ງໄດ້ເຄີຍເປັນທີ່ປຶກສາ, ຊີ້ນຳ, ແລະໃຫ້ກຳລັງໃຈຂອງຕົນ. ໂຟຣໂດໄດ້ຫຼົງທາງໄປໂດຍປາສຈາກແກນດາຟ. ພວກເຮົາເຂົ້າໃຈໃນການສູນເສັຽ. ຈະແມ່ນການສູນເສັຽພໍ່ແມ່, ຫຼື ການສູນເສັຽເພື່ອນຝູງທີ່ຮັກແພງທີ່ໄດ້ຍົກຍ້າຍໜີຈາກໄປ. ພວກເຮົາຮູ້ຄວາມເຈັບປວດຈາກການສູນເສັຽໃຜຜູ້ນຶ່ງທີ່ມີຄວາມໝາຍສຳລັບພວກເຮົາ. ຂ່າວປະເສີດ ໄດ້ບັນລະຍາຍການສູນເສັຽເຊັ່ນນັ້ນຂອງບັນດາພວກອັຄສາວົກ. ພຣະເຢຊູໄດ້ຊົງເປັນຜູ້ນຳພາ, ເປັນຄວາມຫວັງ, ແລະ ເປັນພຣະເຈົ້າຂອງພວກເຂົາເຈົ້າ. ໃນເມື່ອພຣະອົງໄດ້ຊົງອະທິບາຍວ່າພຣະອົງຈະຊົງຈາກພວກເຂົາເຈົ້າໄປ, ພວກເຮົາມີຄວາມຮູ້ສຶກຕໍ່ຄວາມສັບສົນແລະຄວາມຫຍຸ້ງຍາກຂອງພວກເຂົາເຈົ້າ. ຫຼັງຈາກການພົບພໍ້ວ່າພຣະອົງຊົງເປັນພຣະເມຊີອາ, ບັນດາພວກອັຄສາວົກຈະດຳເນີນຕໍ່ໄປໂດຍປາສຈາກພຣະອົງໄດ້ແນວໃດ? ແຕ່ພຣະເຢຊູຊົງໄດ້ບອກພວກເຂົາເຈົ້າວ່າພຣະອົງຈະບໍ່ຊົງປ່ອຍພວກເຂົາເຈົ້າໃຫ້ໂດດດ່ຽວລຳພັງ. ພຣະອົງຈະຊົງສົ່ງອົງພຣະວິຍຍານບໍຣິສຸດຂອງພຣະອົງ ເພື່ອຊົງສະຖິດຢູ່ກັບພວກເຂົາເຈົ້າ. <u>**ພຣະເຢຊູໄດ້ຊົງສັນຍາເໝືອນກັນວ່າພຣະອົງ ຈະບໍ່ຊົງປະຖິ້ມພວກເຮົາ.**</u>

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ໂຢຮັນ 15:26-27</u>

*26 ແຕ່ເມື່ອອົງພຣະຜູ້ຊ່ອຍຜູ້ທີ່ເຮົານີ້ຈະໃຊ້ມາຈາກພຣະບິດາຫາທ່ານທັງຫລາຍ ຄືພຣະວິນຍານແຫ່ງຄວາມຈິງຊຶ່ງອອກຈາກ
ພຣະບິດາໄດ້ສະເດັດມາແລ້ວ, ພຣະອົງນັ້ນແຫຼະຈະຊົງເປັນພະຍານໃຫ້ແກ່ເຮົາ.
27 ສ່ວນທ່ານທັງຫຼາຍກໍເປັນພະຍານເໝືອນ
ກັນ ເພາະວ່າພວກທ່ານຢູ່ກັບເຮົາຕັ້ງແຕ່ຕົ້ນມາແລ້ວ.*

ພຣະເຢຊູໄດ້ຊົງກ່າວຄຳເຫຼົ່ານີ້ໃນການຊົງສເວີຍ(ກິນ)ອາຫານປັສຄາຄາບສຸດທ້າຍຂອງພຣະອົງກັບບັນດາອັຄສາວົກຂອງພຣະອົງໃນຫ້ອງຮັບແຂກຊັ້ນເທິງໃນກຸງເຢຣູຊາເລັມ (ລກ 22:7-13). ພຣະເຢຊູຊົງຮູ້ວ່າອີກຈັກສອງສາມຊົ່ວໂມງພຣະອົງຈະຊົງຖືກຈັບກຸມ, ຖືກພິພາກສາ, ຖືກທຸບຕີ, ແລະຖືກຄຶງທີ່ໄມ້ກາງແຂນ. ພຣະອົງຊົງຮູ້ອີກວ່າບັນດາອັຄສາວົກຈະແຕກກະຈັດກະຈາຍໄປ, ມີຄວາມສັບສົນ, ແລະຢ້ານກົວ. ດັ່ງນັ້ນ,ເມື່ອພວກເຂົາເຈົ້າກິນເຂົ້າຮຽບຮ້ອຍແລ້ວພຣະເຢຊູໄດ້ຊົງກ່າວຄຳອຳລາໃນການຈາກໄປຂອງພຣະອົງຊຶ່ງແມ່ນຊ່ວງເວລາທີ່ໂສກເສົ້າເຫງົາໃຈທີ່ສຸດ. ພວກເຮົາ ສາມາດນຶກຄິດໄດ້ໃນຄວາມສັບສົນ

ຂອງພວກອັຄສາວົກ. ແຕ່ລະຄົນລຽນກັນຖາມພຣະເຢຊູວ່າພຣະອົງເວົ້າກ່ຽວກັບເຣື່ອງໃດ. ພຣະເຢຊູໄດ້ເລີ້ມຕົ້ນສັ່ງສອນບັນດາພວກອັຄສາວົກກ່ຽວກັບອົງພຣະວິນຍານບໍຣິສຸດ. ພຣະອົງໄດ້ຊົງໃຊ້ 2 ຄຳເວົ້າເພື່ອບັນລະຍາຍພຣະລັກສະນະຂອງພຣະວິນຍານບໍຣິສຸດດັ່ງຕໍ່ລົງໄປນີ້:

- **ຜູ້ປຶກສາ.** ຄຳເວົ້າພາສາ ກຣີກແມ່ນ *ປາຣາເຄລໂຕສ* (parakletos) ແລະມີຄວາມໝາຍວ່າ "ຜູ້ທີ່ຖືກຮຽກ ເອີ້ນຫຼືຖືກສົ່ງໄປເພື່ອຊ່ອຍເຫຼືອຜູ້ອື່ນ", "ຜູ້ສນັບສນູນ(an advocate)", "ຜູ້ວິງວອນເພື່ອຜູ້ອື່ນ". ໜ້າທີ່ຂອງ ພຣະວິນຍານບໍຣິສຸດແມ່ນ <u>ການຊົງປາກົດພຣະອົງ(ຕົວ)ຢູ່ນຳບັນດາຜູ້ທີ່ເປັນຂອງພຣະເຢຊູ</u>. ພຣະວິນຍານບໍຣິສຸດຈະຊົງປະທານຄວາມຊ່ອຍເຫຼືອໃນສິ່ງທີ່ພວກເຂົາເຈົ້າຕ້ອງການ.
- **ພຣະວິນຍານແຫ່ງຄວາມຈິງ.** ບົດບາດອັນສຳຄັນຂອງພຣະວິນຍານບໍຣິສຸດແມ່ນການຊົງໃຫ້ຄຳພະຍານແຫ່ງຄວາມຈິງຂອງອົງພຣະເຢຊູ. ໃນພຣະຄັມພີໂຢຮັນ ບົດທີ່ 5 ຂໍ້ 31-39, ພຣະເຢຊູໄດ້ຊົງຣະບຸພະຍານຫົກຄົນ ທີ່ເປັນພະຍານກ່ຽວກັບພຣະອົງ: (1) ພຣະອົງເອງ, (2) ໂຢຮັນບັບຕິສະໂຕ, (3) ການອັສຈັນຂອງພຣະເຢຊູ, (4) ພຣະເຈົ້າອົງພຣະບິດາ, (5) ພຣະຄັມພີ, ແລະ (6) "ຄົນອື່ນ" (ຂໍ້ 32). ພຣະເຢຊູຈະຊົງຣະບຸອົງພຣະວິນຍານບໍຣິສຸດວ່າແມ່ນພະຍານ "<u>**ຄົນອື່ນ**</u>" ນັ້ນ. ພຣະວິນຍານບໍຣິສຸດຈະຊົງສືບຕໍ່ເປັນ<u>ພະຍານແຫ່ງຄວາມຈິງ ຂອງອົງພຣະເຢຊູ</u>.

*ທ່ານຈະບັນລະຍາຍບົດບາດໜ້າທີ່ຂອງຜູ້ປຶກສາວ່າແມ່ນແນວໃດ?*

## 2. <u>ໂຢຮັນ 16:7-11</u>

*[7]ຢ່າງໃດກໍຕາມ, ເຮົາກໍບອກຄວາມຈິງຕໍ່ທ່ານທັງຫຼາຍວ່າ ການທີ່ເຮົາຈາກໄປນັ້ນເປັນປໂຍດແກ່ພວກ ທ່ານເພາະຖ້າເຮົາບໍ່ໄປ ອົງພຣະຜູ້ຊ່ອຍນັ້ນຈະບໍ່ໄດ້ສະເດັດມາຫາພວກທ່ານ ແຕ່ຖ້າເຮົາໄປແລ້ວເຮົາກໍຈະໃຊ້ພຣະອົງນັ້ນມາຫາພວກທ່ານ.[8]ເມື່ອພຣະອົງສະເດັດມາແລ້ວ ພຣະອົງນັ້ນແຫຼະ, ຈະຊົງບັນດົນໃຫ້ໂລກ ຮູ້ແຈ້ງໃນເຣື່ອງ ຄວາມຜິດບາບ, ຄວາມຊອບທັມ, ແລະການພິພາກສາ. [9]ໃນເຣື່ອງຄວາມຜິດບາບນັ້ນ ຄືເພາະເຂົາບໍ່ວາງໃຈເຊື່ອໃນເຮົາ. [10]ໃນເຣື່ອງຄວາມຊອບທັມນັ້ນຄືເພາະເຮົາໄປຫາພຣະບິດາແລະພວກທ່ານຈະບໍ່ເຫັນເຮົາອີກ.[11]ສ່ວນເຣື່ອງການພິພາກສານັ້ນ ຄືເພາະຜູ້ປົກຄອງໂລກນີ້ໄດ້ຖືກພິພາກສາແລ້ວ.*

ພຣະຄັມພີ ບົດທີ່ 16 ເລີ້ມດ້ວຍການອະທິບາຍຂອງພຣະເຢຊູແກ່ບັນດາສາວົກຂອງພຣະອົງກ່ຽວກັບການດຳເນີນຊີວິດຂອງພວກເຂົາເຈົ້າວ່າມັນຈະຫຍຸ້ງຍາກພຽງໃດ? ພຣະເຢຊູໄດ້ຊົງບອກພວກເຂົາເຈົ້າວ່າການຈາກໄປຂອງພຣະອົງ-ຄວາມຈິງແລ້ວ-ຈະເປັນຜົນປໂຍດແກ່ພວກເຂົາເຈົ້າ. ຜົນປໂຍດຈະຕາມມາໃນການຊົງປາກົດຕົວຂອງອົງພຣະວິນຍານບໍຣິສຸດດ້ວຍເຫດວ່າພຣະອົງຈະຊົງສະຖິດຢູ່ກັບພວກເຂົາເຈົ້າໃນທາງທີ່ອົງພຣະເຢຊູບໍ່ໄດ້ຊົງຢູ່ກັບພວກເຂົາເຈົ້າ (ຄືຕລອດວັນເວລາ).

ພຣະເຢຊູຊົງໄດ້ບັນລະຍາຍເຖິງວຽກງານການ<u>ຕັດສິນລົງໂທດ</u>(ພິພາກສາ)ຂອງພຣະວິນຍານບໍຣິສຸດທີ່ ພຣະອົງຈະຊົງສົ່ງມາ. ພວກເຮົາເຫັນການຕັດສິນລົງໂທດນີ້ໃນ 3 ກໍລະນີ (ທາງ) ດັ່ງຕໍ່ລົງໄປນີ້:

1. **ພຣະວິນຍານບໍຣິສຸດຕັດສິນລົງໂທດເຮົາເຣື່ອງຄວາມບາບ.** ພຣະວິນຍານບໍຣິສຸດຊົງນຳພາພວກເຮົາໃຫ້ເຂົ້າໃຈຄວາມຊົ່ວຮ້າຍຢູ່ໃນຫົວໃຈຂອງພວກເຮົາ. ໃນຂໍ້ 9, ພຣະເຢຊູຊົງຜູກມັດຄວາມບາບຂອງພວກເຮົາກັບການຂາດສັດທາ (ຄວາມເຊື່ອ) ຂອງພວກເຮົາ. ການຂາດຄວາມເຊື່ອບໍ່ແມ່ນພຽງແຕ່ປະສົບກັບຄວາມສົງສັຍເທົ່ານັ້ນ ມັນກ່ຽວຂ້ອງກັບການປະຕິເສດຄວາມຈິງຂອງພຣະເຢຊູຢ່າງເຕັມໃຈ.
2. **ພຣະວິນຍານບໍຣິສຸດຕັດສິນລົງໂທດເຮົາເຣື່ອງຄວາມຊອບທັມ.** ພຣະເຢຊູໄດ້ຊົງກ່າວເຖິງຄວາມຊອບທັມຂອງພຣະອົງເອງ. ຄວາມຈິງແລ້ວ, ໃນຂໍ້ 10 ພຣະເຢຊູຊົງຜູກມັດການຕັດສິນລົງໂທດເຣື່ອງຄວາມຊອບທັມກັບຂໍ້ເທັດຈິງທີ່ພຣະອົງໄດ້ຊົງກັບໄປຫາພຣະບິດາຂອງພຣະອົງ. ການກັບໄປຂອງພຣະເຢຊູສູ່ສະຖານທີ່ (ຕຳແໜ່ງ) ພຣະຫັດເບື້ອງຂວາຂອງພຣະເຈົ້າອົງພຣະບິດາ ຢືນຢັນວ່າພຣະເຢຊູຊົງບໍຣິສຸດ ແລະຊອບທັມຢ່າງສົມບູນ (ເຕັມປ່ຽມຮ້ອຍເປີເຊັນ).

3. **ພຣະວິນຍານບໍຣິສຸດຕັດສິນລົງໂທດເຮົາເລື່ອງພິພາກສາ.** ເມື່ອພວກເຮົາເຫັນຄວາມບາບຂອງພວກເຮົາກົງກັນຂ້າມກັບຄວາມຊອບທັມຂອງພຣະຄຣິດ, ມັນເປັນການແຈ່ມແຈ້ງວ່າພວກເຮົາສົມຄວນໄດ້ຮັບການພິພາກສາ. ໃນຂໍ້ 11 ພຣະເຢຊູຊົງຜູກມັດການຕັດສິນລົງໂທດຂອງພວກເຮົາໃສ່ການພິພາກສາຂອງ *"ຜູ້ປົກຄອງໂລກ"*, ຊຶ່ງເປັນການອ້າງອີງຂອງມານຊາຕານ. ພຣະວິນຍານບໍຣິສຸດຕັດສິນລົງໂທດພວກເຮົາໃນສິ່ງທີ່ພວກ ເຮົາມີຢູ່ໃນຫົວໃຈຄື: <u>ການກະບົດທີ່ຮັບໃຊ້ຕົນເອງແບບດຽວກັນກັບຂອງພະຍາມານ (ຂອງມານຊາຕານ)</u>.

ພຣະປະສົງຂອງອົງພຣະເຈົ້າບໍ່ແມ່ນເພື່ອເຮັດໃຫ້ໝົດກຳລັງ ໃນເວລາທີ່ພຣະວິນຍານບໍຣິສຸດຊົງຕັດສິນລົງໂທດພວກເຮົາ. ພຣະອົງໄດ້ຕັດສິນເຮົາເພື່ອຈະດຶງພວກເຮົາໄປສູ່ຄວາມລອດພົ້ນ. ຄວາມຕັ້ງໃຈຂອງພຣະເຢຊູແມ່ນເພື່ອໃຫ້ເຮົາປະສົບກັບການໃຫ້ອະພັຍຂອງພຣະອົງ, ການໄຖ່ຂອງພຣະອົງ, ແລະຊີວິດນິຣັນດອນທີ່ພຣະອົງໄດ້ຊົງໄຖ່ຖອນພວກເຮົາຢູ່ເທິງໄມ້ກາງແຂນ.

*ຜູ້ຄົນມີຄວາມຮູ້ສຶກນ້ອຍລົງຕໍ່ການຕັດສິນລົງໂທດຂອງພຣະວິນຍານບໍຣິສຸດໂດຍວິທີໃດ?*

## 3. <u>ໂຢຮັນ 16:12-15</u>

*12"ເຮົາຍັງມີອີກຫລາຍສິ່ງທີ່ຈະບອກແກ່ທ່ານທັງຫລາຍ ແຕ່ດຽວນີ້ພວກທ່ານບໍ່ອາດຈະທົນໄດ້. 13ແຕ່ເມື່ອ ພຣະອົງນັ້ນຄືພຣະ*
*ວິນຍານແຫ່ງຄວາມຈິງຈະສະເດັດມາແລ້ວ ພຣະອົງຈະນຳທ່ານທັງຫລາຍໄປສູ່ຄວາມຈິງ ທັງໝົດ ເພາະພຣະອົງຈະບໍ່ກ່າວ*
*ແຕ່ລຳພັງຂອງພຣະອົງເອງ ແຕ່ພຣະອົງຊົງໄດ້ຍິນສິ່ງໃດກໍຈະຊົງກ່າວສິ່ງນັ້ນ ແລະຈະຊົງປະກາດໃຫ້ທ່ານທັງຫລາຍຮູ້ເຖິງສິ່ງ*
*ເຫຼົ່ານີ້ທີ່ຈະເກີດຂຶ້ນ. 14ພຣະອົງຈະຊົງໃຫ້ເຮົາໄດ້ຮັບກຽດ ເພາະວ່າພຣະອົງຈະຊົງເອົາສິ່ງທີ່ເປັນຂອງເຮົາມາປະກາດແກ່ທ່ານ*
*ທັງຫຼາຍ. 15ທຸກໆສິ່ງທີ່ພຣະບິດາຊົງມີຢູ່ນັ້ນກໍເປັນຂອງເຮົາ ເຫດສັນນັ້ນເຮົາຈຶ່ງກ່າວວ່າ ພຣະວິນຍານຊົງເອົາສິ່ງຊຶ່ງເປັນຂອງ*
*ເຮົານັ້ນມາປະກາດແກ່ທ່ານທັງຫລາຍ.*

ພຣະເຢຊູໄດ້ຊົງອະທິບາຍຫຼວງຫຼາຍແກ່ບັນດາອັຄສາວົກຂອງພຣະອົງ, ແຕ່ພຣະອົງຊົງຮູ້ວ່າພວກເຂົາເຈົ້າຍັງບໍ່ສາມາດເຂົ້າໃຈໝົດທຸກຢ່າງທີ່ພຣະອົງຊົງປາຖນາຢາກໃຫ້ພວກເຂົາເຈົ້າເຂົ້າໃຈ. ພຣະເຢຊູຊົງສາມາດສັ່ງສອນພວກເຂົາເຈົ້າຫຼາຍເທົ່າທີ່ພວກເຂົາເຈົ້າສາມາດເຂົ້າໃຈເທົ່ານັ້ນ. ໃນເມື່ອພຣະວິນຍານບໍຣິສຸດ -"<u>ພຣະວິນຍານແຫ່ງຄວາມຈິງ</u>"-ຊົງສະເດັດມາປະທັບຢູ່ກັບພວກເຂົາເຈົ້າ ພຣະອົງຈະຊົງນຳພາບັນດາຜູ້ຕິດຕາມພຣະຄຣິດ -"<u>ໄປສູ່ຄວາມຈິງທັງໝົດ</u>". ພຣະວິນຍານບໍຣິສຸດຈະຊົງສັ່ງສອນພວກເຂົາເຈົ້າເພີ້ມເຕີມກ່ຽວກັບພຣະລັກສະນະແລະພຣະກາຍຂອງພຣະຄຣິດ. ເຖິງແມ່ນວ່າບັນດາພວກອັຄສາວົກໄດ້ສັງເກດເຫັນພຣະເຢຊູຢ່າງໃກ້ຊິດ, ພວກເຂົາເຈົ້າບໍ່ສາມາດເຂົ້າໃຈໄດ້ທັງໝົດວ່າພຣະອົງແມ່ນໃຜ. ເຂົາເຈົ້າບໍ່ສາມາດເຂົ້າໃຈແຈ່ມແຈ້ງກ່ຽວກັບພາຣະກິຈຂອງພຣະຄຣິດຕໍ່ໂລກ. ເຖິງຢ່າງໃດກໍຕາມ, ພຣະວິນຍານບໍຣິສຸດຈະຊົງປ່ຽນແປງສິ່ງນັ້ນໂດຍການຊົງເປີດເຜີຍຄວາມຈິງເພື່ອໃຫ້ພວກເຂົາເຈົ້າເຂົ້າໃຈ.

*ການຝຶກແອບແລະລະບຽບວິນັຍແນວໃດຊ່ອຍເຫຼືອທ່ານໃຫ້ໄດ້ຍິນໄດ້ຟັງການຊົງນຳພາຂອງພຣະວິນຍານບໍຣິສຸດ?*

ພຣະວິນຍານບໍຣິສຸດຈະຊົງເວົ້າພຽງແຕ່ສິ່ງທີ່ພຣະອົງໄດ້ຍິນຈາກພຣະເຈົ້າ. ພຣະອົງຈະບໍ່ຊົງນຳພວກເຂົາເຈົ້າ(ອັຄສາວົກ)ໄປສູ່ຄວາມຈິງທີ່ແຕກຕ່າງຈາກສິ່ງທີ່ພຣະເຢຊູໄດ້ແບ່ງປັນກັບພວກເຂົາເຈົ້າ, ແຕ່ພຣະອົງຈະຊົງສືບຕໍ່ເຮັດໃຫ້ພວກເຂົາເຈົ້າເຂົ້າໃຈຢ່າງເລິກເຊິ່ງຂຶ້ນຕໍ່ໄປ.

ອີກລັກສະນະອື່ນຂອງພັນທະກິຈຂອງພຣະວິນຍານບໍຣິສຸດແມ່ນການຊົງນຳພຣະຣັສມີພາບມາສູ່ພຣະຄຣິດ. ພຣະຣາຊພາຣະກິຈ(ວຽກງານ)ຂອງພຣະອົງໃນບັນດາຜູ້ເຊື່ອແລະບັນດາຜູ້ບໍ່ເຊື່ອແມ່ນເພື່ອດຶງດູດຄວາມສົນໃຈໄປທີ່ພຣະເຢຊູ, ການປ່ຽນແປງສະພາບ, ການຊ່ອຍໃຫ້ລອດພົ້ນຂອງພຣະອົງເທິງໄມ້ກາງແຂນ, ແລະການກັບຄືນມາຂອງພຣະອົງອີກ. **<u>ພຣະວິນຍານບໍຣິສຸດຍັງຊົງເປັນພຣະວິນຍານແຫ່ງຄວາມຈິງ</u>!** ພຣະອົງຍັງຊົງນຳພາບັນດາຜູ້ທີ່ເຊື່ອໃຫ້ເຂົ້າໃຈໃນອົງພຣະຄຣິດ ແລະ ພຣະ

ธาຊພາຣະກິຈ(ວຽກງານ)ຂອງພຣະອົງ ເພື່ອບັນລຸເຖິງບັນດາຜູ້ທີ່ຫຼົງຫາຍທັງຫຼາຍໃນໂລກນີ້ <u>ໂດຍຂ່າວປະເສີດຂອງອົງພຣະເຢຊູຄຣິດເຈົ້າ</u>.

*ກຸ່ມຂອງພວກເຮົາສາມາດຊ່ວຍເຫຼືອກັນແລະກັນໃຫ້ຍຶດໝັ້ນໃນຄວາມຈິງໄດ້ໂດຍວິທີໃດ?*

## ນຳໃຊ້ໃນຊີວິດ:

ພຣະວິນຍານບໍຣິສຸດຊົງຕັດສິນໂທດບາບແລະຊົງຊີ້ໃຫ້ເຫັນຄວາມຈິງແຫ່ງຄວາມລອດພົ້ນ. ຈົ່ງໃຊ້ນີ້ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງຕອບສນອງ.** ຖ້າທ່ານບໍ່ເຄີຍຫັນໜີຈາກຄວາມບາບຂອງທ່ານຈັກເທື່ອ ແລະຮັບເອົາການຊົງໃຫ້ອະພັຍຂອງພຣະຄຣິດ, ຈົ່ງຖາມຊາວຄຣິສຕຽນທີ່ເຕີບໂຕໃຫ້ສະແດງໃຫ້ທ່ານເຫັນວິທີການນັ້ນ.
- **ຈົ່ງຟັງ.** ຈົ່ງສງວນເວລາ 1 ຊົ່ວໂມງເພື່ອອ່ານພຣະຄຳຂອງພຣະເຈົ້າ. ຈົ່ງຊອກຫາສະຖານທີ່ໆທ່ານສາມາດຢູ່ໂດດດ່ຽວລຳພັງ. <u>ປິດສຽງ</u> ທີວີ, ໂທຣະສັບ, ແລະ ອິນເຕີແນທ. ຈົ່ງປ່ອຍໃຫ້ພຣະວິນຍານບໍຣິສຸດຊົງເວົ້າກັບທ່ານຜ່ານທາງພຣະຄັມພີຫຼາຍໜ້າ. ຈົ່ງສແວງຫາການຊົງນຳພາຂອງພຣະອົງໃນຄວາມເຂົ້າໃຈແລະປະຕິບັດຄວາມຈິງຂອງພຣະຄຳພຣະເຈົ້າ.
- **ຈົ່ງຝຶກຫັດ.** ຖ້າທ່ານເປັນຂອງພຣະຄຣິດ, ພຣະວິນຍານບໍຣິສຸດຊົງສະຖິດຢູ່ກັບທ່ານສເມີໄປ. ໃນອາທິດນີ້, ຈົ່ງເລີ້ມມີນິສັຍທີ່ຈະຫັນແນວຄິດຂອງທ່ານຫາພຣະຄຣິດ. ຈົ່ງຊອກຫາສິ່ງທີ່ພຣະວິນຍານບໍຣິສຸດຊົງກຳລັງເຮັດຢູ່ໃນຊີວິດຂອງທ່ານແລະອ້ອມຮອບຕົວທ່ານ. ຈົ່ງສັງເກດເບິ່ງພາຣະກິຈຂອງພຣະວິນຍານບໍຣິສຸດໃນການສົນທະນາ, ວຽກງານຂອງທ່ານ, ແລະ ຢູ່ໃນໂລກອ້ອມຮອບຕົວທ່ານ.

ພວກເຮົາທຸກຄົນເຂົ້າໃຈວ່າມັນຮູ້ສຶກແນວໃດທີ່ຈະຢູ່ໂດດດ່ຽວໃນລະດັບໃດລະດັບນຶ່ງ ຂໍຂອບໃຈນຳຜູ້ທີ່ຕິດຕາມພຣະຄຣິດ, ພວກເຮົາໄດ້ຖືກສັນຍາວ່າພວກເຮົາບໍ່ເຄີຍຢູ່ຄົນດຽວແທ້ໆ. <u>**ການຕັດສິນລົງໂທດຂອງພຣະວິນຍານບໍຣິສຸດເປັນພຽງວິທີນຶ່ງທີ່ພວກເຮົາຖືກຕັກເຕືອນເຖິງຄວາມຈິງນັ້ນ**</u>.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**